CRI online ພາສາລາວ

ສະເຫຼີມສະຫຼອງການປະຕິຮູບເປີດປະຕູສູ່ພາຍນອກຂອງຈີນຄົບຮອບ 40 ປີ

Choose a language

ຜູ້ດຳເນີນລາຍການ





ລຸນ ວິໄຊ

# ສະເຫຼີມສະຫຼອງຜົນສຳເລັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳໄຜ່ຢ່າງເປັນທາງການ

2018-01-22 16:51:56 cri




ພິທີສະເຫຼີມສະຫຼອງຜົນສຳເລັດໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳໄຜ່ ໄດ້ຈັດຂຶ້ນໃນວັນທີ 22 ມັງກອນນີ້ ທີ່ແຂວງໄຊສົມບູນ ໂດຍການເປັນກຽດເຂົ້າຮ່ວມຂອງທ່ານ ຄຳມະນີ ອິນທິລາດ, ກຳມະການສູນກາງພັກ, ເລຂາຄະນະພັກ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່, ທ່ານຫວາງຢີທົງ, ປະທານ ບໍລິສັດ ນໍຣິນໂກ, ທ່ານບຸນອູ້ມ ສີວັນເພັງ, ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ທ່ານ ທອງລອຍ ສີສຸວົງ, ເຈົ້າແຂວງແຂວງໄຊສົມບູນ ພ້ອມດ້ວຍຜູ້ຕາງໜ້າທັງຝ່າຍລາວ ແລະ ຈີນເຂົ້າຮ່ວມ.

ທ່ານຄຳມະນີ ກ່າວວ່າ, ໂຄງການເຂື່ອນໄຟຟ້ານ້ຳໄຜ່ ກໍແມ່ນໂຄງການໜຶ່ງ ທີ່ມີຄວາມສຳຄັນ ຊຶ່ງໄດ້ກຳນົດໃນກອບແຜນແມ່ບົດຂອງ ການພັດທະນາລະບົບໄຟຟ້າ ຢູ່ປະເທດເຮົາໄລຍະນີ້ຮອດປີ 2020 ແລະ ໂຄງການນີ້ ຈະສະໜອງພະລັງງານຮັບໃຊ້ໃຫ້ ແຂວງ ໄຊສົມບູນ ແລະ ຊຽງຂວາງ ໂດຍສະເພາະ ຢູບໍລິເວນເມືອງ ລ່ອງແຈ້ງ ໃຫ້ມີຄວາມຮັບປະກັນ ແລະ ມີປະສິດທິຜົນດີຂຶ້ນຕື່ມ ພ້ອມນີ້ກໍເປັນການສ້າງແຫຼ່ງລາຍຮັບ, ສ້າງວຽກເຮັດງານທຳ ແລະ ຍົກລະດັບຊີວິດ ການເປັນຢູ່ຂອງປະຊາຊົນທີ່ອາໄສຢູ່ໃຫ້ ບໍລິເວນໂຄງການ ແລະທອງຖິ່ນ ຂຶ້ນຕື່ມ.

ASIA ເວທີປາໄສຫາລືອາຊີໂປອາວ ກອງປະຊຸມໂຕະມົນຜູ້ນຳສື່ມວນຊົນ Media Leaders Roundtable

ເຫດການກ່ຽວກັບເກາະຕ້ຽວອີ

CHAMPA ຈຳປາ

ວິທະຍຸ CRI FM 93.0 ຄົບຮອບ 7 ປີ

ສະເຫຼີມສະຫຼອງບຸນກຸດຈີນປີ 2014

FreecallCRI ທ່ານສາມາດລົມກັນກັບ CRIທາງອິນເຕີເນັດ Free ໂດຍຜ່ານຫູຟັງແລະມີໄມໂຄຣຟອນ

ກອດຄວາມຄິດເຫັນ 0 ຂໍ້ | ຂຽນຄວາມຄິດເຫັນຢູ່ທີ່ນີ້... ເຂົ້າສູ່ລະບົບ: 分享




ທ່ານຫວາງຢີ່ທິງກ່າວວ່າ, ມື້ນີ້ໂຄງການເຂື່ອນໄຟຟ້ານ້ຳໄຜ່ ໄດ້ສຳເລັດລົງຢ່າງສົມບູນ, ມັນເປັນເຄື່ອງໝາຍສະແດງເຖິງບໍລິສັດນໍຣິນໂກ ໄດ້ກ້າວຂຶ້ນດຳເນີນທຸລະກິດໃນລາວອີກລະດັບໃໝ່ໃນການຮ່ວມມືກັບລັດຖະ
ບານລາວ ແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈົນໄດ້ຮັບໝາກຜົນແຫ່ງໄຊຊະນະ; ການກໍ່ສ້າງ ແລະ ດຳເນີນທຸລະກິດຂອງໂຄງການເຂື່ອນໄຟຟ້ານ້ຳໄຜ່, ບໍ່ພຽງແຕ່ພາໃຫ້ເສດຖະກິດພາຍໃນທ້ອງຖິ່ນດີຂຶ້ນເທົ່ານັ້ນ, ຍັງສາມາດຕອບສະໜອງພະລັງງານທີ່ສະອາດ ແລະ ສ້າງຜົນປະໂຫຍດໃນການເຕີບໂຕທາງດ້ານເສດຖະກິດຂອງລາວ.

ໂອກາດນີ້, ທ່ານທອງລອຍ ສີສຸລິດໄດ້ກ່າວວ່າ, ຜົນສຳເລັດຂອງໂຄງການເຂື່ອນໄຟຟ້າ ນ້ຳໄຜ່ ໃນຄັ້ງນີ້ ມັນເປັນການປະກອບສ່ວນ ອັນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງບັນດາແຂວງພາກເໜືອ ໂດຍສະເພາະແຂວງໄຊສົມບູນ ໃຫ້ມັ່ງຄັ່ງເຂັ້ມແຂງ, ເປັນທ່າແຮງໃນການຜະລິດ ແລະ ສະໜອງກະແສໄຟຟ້າໃຫ້ພຽງພໍ ກັບຄວາມຮຽກຮ້ອງຕ້ອງການຂອງປະຊາຊົນບັນດາເຜົ່າ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການຫັນປ່ຽນແບບວິທີການຜະລິດໂດຍສະເພາະຈາກເສດຖະກິດທຳມະຊາດ - ເຄິ່ງທຳຊາດ ໄປສູ່ເສດຖະກິດຜະລິດເປັນສິນຄ້າ, ຫັນປ່ຽນອາຊີບການທຳມາຫາກິນ ແລະ ເຮັດໃຫ້ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າດີຂຶ້ນເປັນກ້າວໆ, ສ້າງລາຍຮັບໃຫ້ປະຊາຊົນຫຼາຍຂຶ້ນ. ພ້ອມນີ້ໂຄງການດັ່ງກ່າວຖືເປັນບາດກ້າວຫັນປ່ຽນໃໝ່ທີ່ຕັ້ງໜ້າເພື່ອຍົກລະດັບໃນການພັດທະນາພື້ນຖານໂຄງລ່າງຂອງແຂວງ ໃຫ້ມີຄວາມເຂັ້ມແຂງຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າຕາມທິດສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ ແລະ ສ້າງບ້ານເປັນຫົວໜ່ວຍພັດທະນາ.

ກອດຄວາມຄິດເຫັນ 0 ຂໍ້ | ຂຽນຄວາມຄິດເຫັນຢູ່ທີ່ນີ້... ເຂົ້າສູ່ລະບົບ: 分享



ເຂື່ອນໄຟຟ້ານ້ຳໄຜ່ ຕັ້ງຢູ່ເຂດເມືອງໂພນ (Phoun) ແຂວງໄຊສົມບູນ,. ສະຖານນີເກັບໄຟຟ້າມີຄວາມຈຸ 86 MW ແລະ ສາມາດຜະລິດພະລັງງານໄຟຟ້າໃນແຕ່ລະປີໄດ້ ປະມານ 417 ລ້ານກິໂລວັດໂມງ, ໂດຍນຳໃຊ້ງົບປະມານໃນການລົງທຶນທັງຫມົດ 218 ລ້ານໂດລາສະຫະລັດ, ແລະພະລັງງານໄຟຟ້າທັງຫມົດຈາກໂຄງການນີ້ຈະຂາຍໃຫ້ແກ່ ລັດວິສາຫະກິດໄຟຟ້າລາວ.

**ຂ່າວ-ບົດທີ່ກ່ຽວຂ້ອງ**

ສະແດງຄວາມຄິດເຫັນ(0 ຂໍ້)

ຂຽນຄວາມຄິດເຫັນຢູ່ທີ່ນີ້...

ຜູ້ເຂົ້າຊົມ 手机登录

ບໍ່ມີຄວາມຄິດເຫັນເທື່ອ

ສິດສະແດງຄວາມເຫັນດ້ວຍ changyan

ວິທີຕິດຕັ້ງ Font ລາວ China ABC ຮຽນພາສາຈີນ

ກອດຄວາມຄິດເຫັນ 0 ຂໍ້ ຂຽນຄວາມຄິດເຫັນຢູ່ທີ່ນີ້... ເຂົ້າສູ່ລະບົບ: 分享